**ການບ້ານບົດທີ 2 ພາກຕົ້ນ**

# ເມື່ອໂປໂລເປັນເດັກ

**1** ແຕ່ກ່ອນໂປໂລຊື່ຫຍັງ? (ເບິ່ງ ກຈກ 13:9) ____________________

**2** ມີຫຼາຍຄົນທີ່ມີສອງຊື່ ໂປໂລກໍມີສອງຊື່ເຊັ່ນດຽວກັນ.

ຕາມພາສາຢິວ ເພິ່ນວ່າໂຊໂລ

ແຕ່ຄົນຕ່າງຊາດໃສ່ຊື່ວ່າ ໂປໂລ

ກ. ໃນເມື່ອເພິ່ນອອກໄປປະກາດພະທຳໃຫ້ແກ່ຄົນຕ່າງຊາດ ເພິ່ນຈະໃສ່ຊື່ໃດ? __________

ຂ. ແຕ່ເມື່ອເກີດໃນສາສະໜາຢິວ ພໍ່ແມ່ໃສ່ຊື່ຫຍັງ? ____________________

## ໃນເມືອງຕາໂຊ




**3** ກ. ໂຊໂລເກີດໃນເມືອງໃດ? ____________

ຂ. ເຖິງວ່າເມືອງຕາໂຊບໍ່ໄດ້ເປັນເມືອງຢິວກໍຕາມ ແຕ່ຄອບຄົວຂອງໂຊໂລເປັນເຊື້ອສາຍຂອງໃຜ?

____________________

**4** ເດັກນ້ອຍຜູ້ຊາຍທຸກຄົນໃນເຊື້ອວົງຊາດຢິວ ມີພິທີເມື່ອອາຍຸ 8 ວັນ. ພິທີນັ້ນຄືພິທີໃດ? (ປຖກ 17:11-12) ____________________

- *ໝາຍເຫດ: ການຕັດບໍ່ແມ່ນອັນດຽວກັບການຕອນ. ໃນພິທີຕັດນັ້ນ ເຂົາຕັດແຕ່ໜັງປົກອະໄວຍະວະເພດຂອງຜູ້ຊາຍອອກ. ໃນສະໄໝນັ້ນເຂົາຕັດເປັນສັນຍາລັກສຳລັບຄົນທີ່ຖືສາສະໜາ ຢິວ ໃນສະໄໝນີ້ມີໝໍບາງຄົນກໍຕັດເພື່ອຮັກສາຄວາມສະອາດ.*

**5** ແມ່ນພວກໃດທີ່ຮັບພິທີຕັດໃນເມື່ອອາຍຸ 8 ວັນ? (ເລືອກ)

ກ. ເດັກຜູ້ຍິງຢິວ ຂ. ເດັກຜູ້ຊາຍຢິວ ຄ. ຕ່າງຊາດ

**6** ໃຫ້ອ່ານ ຟລປ 3:5

ກ. ໃນຂໍ້ນີ້ເຫັນວ່າເພິ່ນເປັນລູກຫຼານຂອງບຸກຄົນໃດ? ____________________

ຂ. ເປັນຊາດໃດ? ____________________

**7** ກ. ຄົນຢິວໃສ່ຊື່ໃນເວລາດຽວກັນທີ່ເຮັດພິທີຕັດ. ໃນເວລານັ້ນ ເຂົາໃສ່ຊື່ຫຍັງໃຫ້ເພິ່ນ? ____

____________________

ຂ. ເຂົາເຮັດພິທີນັ້ນໃນເມືອງໃດ? ____________________

**8** ກ. ພະເຢຊູກໍ່ຮັບພິທີໃດເມື່ອອາຍຸ 8 ວັນ? ________________________________
ຂ. ເຂົາໃສ່ຊື່ຫຍັງ? ____________________________________________
ຄ. ພະເຢຊູເປັນເຊື້ອສາຍໃຜ? ____________________________________

**9** ໃນທຸກເມືອງທີ່ມີຄົນຢິວມີອາຄານສະເພາະທີ່ຄົນຢິວສົ່ງເດັກນ້ອຍໄປສຶກສາພະທຳຂອງພະເຈົ້າ.
ກ. ບ່ອນນັ້ນເອີ້ນວ່າຢ່າງໃດ? (ກຈກ 15:21) ______________________________
ຂ. ເມື່ອຍັງເປັນເດັກໂປໂລຮຽນພະທຳຂອງພະເຈົ້າຢູ່ໃສ? ______________________
ຄ. ໃນເມືອງໃດ? ______________________________________________

**10** ໃນສະໄໝນັ້ນພະທຳພະສັນຍາໃໝ່ຍັງບໍ່ໄດ້ຂຽນ. ສະນັ້ນ ພະທຳທີ່ໂປໂລຮຽນເປັນ- ພະຄຳພີໃດ? (ເດີມ ຫຼື ໃໝ່) ________________________________

**11** ກ. ໃນຮູບຂ້າງຂວານີ້ ໂປໂລອ່ານ ເລື່ອງພໍ່ເດີມຂອງຊາດຢິວ.
ຄົນ ນັ້ນຊື່ຫຍັງ? ________________________________
ຂ. ອ່ານຈາກເຫຼັ້ມໃດ? ______________________________




**12** ເມື່ອຍັງເປັນເດັກນ້ອຍໂຊໂລສຶກສາເລື່ອງອັບລາຮາມ ເມື່ອພົບພະເຢຊູແລ້ວ ເພິ່ນຍົກອັບລາຮາມ ມາເປັນຕົວຢ່າງ. ໃນຄາລາເຕຍ 3:6 ເພິ່ນຂຽນວ່າ ອັບລາຮາມມີຄວາມເຊື່ອທີ່ພະເຈົ້າຊົງຖືວ່າເປັນອັນໃດ? ________________________________

*ຕໍ່ໄປເຮົາຈະຮຽນເລື່ອງຄວາມເຊື່ອຂອງອັບລາຮາມທີ່ໂປໂລຍົກມາເປັນຕົວຢ່າງ.*

**13** ໃຫ້ສະຫລູບກ່ອນ:
ກ. ໂຊໂລສຶກສາເລື່ອງອັບລາຮາມຈາກພະຄຳພີໃດ? ________________________
ຂ. ຮຽນຢູ່ບ່ອນໃດ? ____________________________________________
ຄ. ເມືອງໃດ? ________________________________________________
ງ. ຖືກພິທີໃດໃນເມື່ອອາຍຸ 8 ວັນ? ____________________________________

*ຈົ່ງຮັບພິຈາລະນາ*

*ໃນພາກປາຍຕໍ່ໄປນີ້ເຮົາຈະຮຽນເລື່ອງຄວາມເຊື່ອຂອງອັບລາຮາມໃຫ້ອ່ານພະທຳເຮັບເລີ 11:8-10 ແລ້ວໃຫ້ຮັບພິຈາລະນາກ່ຽວກັບຄວາມເຊື່ອຂອງອັບລາຮາມຄື ອັບລາຮາມເຮັດຫຍັງຈຶ່ງສະແດງຄວາມ ເຊື່ອ? (ບໍ່ຕ້ອງຈົດຄຳຕອບໄວ້) ຄວາມເຊື່ອຂອງທ່ານເປັນຢ່າງໃດ? ຖ້າທ່ານໄວ້ວາງໃຈກັບພະ ເຈົ້າແທ້ ໆ ທ່ານອາດຈະສະແດງອອກໂດຍການເຮັດຫຍັງ?*

- *ໃຫ້ທ່ານທວນບົດຮຽນນີ້ຄືນ ຈົນກວ່າຈະຮູ້ໝົດ ແລ້ວເປີດບົດເສັງ*

ຄຳຕອບ:

**1** *ໂຊໂລ*

**2** *ກ. ໂປໂລ ຂ. ໂຊໂລ*

**3** *ກ. ຕາໂຊ ຂ. ອັບລາຮາມ*

**4** *ພິທີຕັດ*

**5** *ຂ ຖືກ*

**6** *ກ. ອັບລາຮາມ ຂ. ຢີວ (ອິສຣາເອັນ)*

**7** *ກ. ໂຊໂລ ຂ. ຕາໂຊ*

**8** *ກ. ພິທີຕັດ ຂ. ເຢຊູ ຄ. ອັບລາຮາມ*

**9** *ກ. ໂຮງທຳມະເທດສະໜາ ຂ. ໂຮງທຳມະເທດສະໜາ ຄ. ຕາໂຊ*

**10** *ພະຄຳພີເດີມ*

**11** *ກ. ອັບລາຮາມ ຂ. ພະຄຳພີເດີມ*

**12** *ຄວາມຊອບທຳ*

**13** *ກ. ພະຄຳພີເດີມ ຂ. ໂຮງທຳມະເທດສະໜາ ຄ. ຕາໂຊ ງ. ພິທີຕັດ*

**ການບ້ານບົດທີ 2 ພາກປາຍ**

# ໂປໂລນັບຖືອັບລາຮາມ

*ໃນພາກຕົ້ນບົດນີ້ ເຫັນວ່າໂປໂລສຶກສາເລື່ອງອັບລາຮາມເປັນຕົວຢ່າງທີ່ດີ ແລ້ວຕໍ່ໄປໃນເວລາເພິ່ນຂຽນຈົດໝາຍໄປຫາຄຣິສຕະຈັກຕ່າງ ໆ ເພິ່ນມັກກ່າວເລື່ອງອັບລາຮາມ.*
*(ທຳອິດແມ່ນໃສ່ຊື່ວ່າອັບລາມ)*

**1** ໃນຄລຕ 3:6 ເຫັນວ່າອັບລາຮາມເຊື່ອໃຜ? ________________________________

## ເຫັນຄວາມເຊື່ອເທື່ອທຳອິດ




**2** ກ. ໃນຮູບ "ກ" ພະເຈົ້າສັນຍາວ່າຈະບອກ ຫຍັງ? ________________

ຂ. ກ່ອນນັ້ນອັບລາມຢູ່ຢ່າງໃດ?
(ເລືອກ)
_____ ໃນເຮືອນດີ ໆ
_____ ໃນຕູບຜ້າ

ຄ. ຫຼັງຈາກມາເຖິງປະເທດທີ່ພະເຈົ້າສັນຍາໃຫ້ເພິ່ນຢູ່ຢ່າງໃດໃນຮູບ ຄ?
(ເລືອກ)
______ ໃນເຮືອນດີ ໆ
______ ໃນຕູບຜ້າ

ງ. ເພິ່ນເດີນທາງໄປຈັກຫຼັກ?
__________________________

*ໃຫ້ທ່ານຄຶດດີໆ ກ່ອນ. ໃນສະໄໝນັ້ນບໍ່ມີຖະໜົນ ບໍ່ມີໄປສະນີ ບໍ່ມີໂທລະເລກເທື່ອ. ເພິ່ນບໍ່ຮູ້ເລື່ອງດິນແດນທີ່ຈະໄປ ຮູ້ແຕ່ປະການດຽວວ່າ ພະເຈົ້າຈະໃຫ້ເພິ່ນອອກຈາກບ້ານເກີດເມືອງນອນໄປເຖິງເຂດແດນທີ່ກວ້າງໄກ.*

**3** ແມ່ນໂດຍຄວາມເຊື່ອໃນພະເຈົ້າ ທີ່ອັບລາມໜີປະບ້ານເດີມ ແລ້ວໄປຊອກຫາປະເທດການາອານ. ແທນທີ່ຈະຢູ່ໃນເຮືອນດີໆແຕ່ເຂົາສຳພັດພັກຢູ່ໃນຜ້າເຕັນ.
(ຕໍ່ໄປນີ້ໃຫ້ຕື່ມຄວາມທີ່ຂາດ)

ກ. ຄວາມເຊື່ອຂອງອັບລາມປາກົດມາໃນເວລາເພິ່ນເດີນທາງຈາກບ້ານເກີດເມືອງນອນໄປເຖິງ _______________ ທີ່ພະເຈົ້າສັນຍາໄວ້.

**4** ສະໄໝຂອງພະເຢຊູແລະໂປໂລປຸ່ງນຊື່ວ່າເປັນປະເທດປາແລັດສະຕິນ. ໃນທຸກວັນນີ້ດິນແດນນັ້ນມີ ຊື່ວ່າອິດສະລາເອນ ແຕ່ເຊື້ອສາຍຢິວຍັງຢູ່.

ກ. ໃນສະໄໝອັບລາມ ດິນນັ້ນມີຊື່ວ່າຢ່າງໃດ? _______________________________

ຂ. ໃນສະໄໝພະເຢຊູແລະໂປໂລເອີ້ນວ່າຫຍັງ? _______________________________

ຄ. ໃນສະໄໝປະຈຸບັນເອີ້ນວ່າຫຍັງ? _______________________________________

ງ. ໃຜມີຄວາມເຊື່ອອັນໃຫຍ່ຫຼວງຈຶ່ງໄປຍຶດເອົາດິນແດນນັ້ນໄດ້? ___________________

## ເຫັນຄວາມເຊື່ອເທື່ອທີສອງ

*ແຕ່ຍັງມີອີກບັນຫາໜຶ່ງ*

**5** ເມຍຂອງອັບລາຮາມບໍ່ມີລູກເພາະນາງເປັນໝັນ. (ປຖກ 11:30) ນາງມີບັນຫາໃດ? (ເລືອກ)

ກ. ບໍ່ຢາກມີລູກ

ຂ. ບໍ່ມີຜົວ

ຄ. ເປັນໝັນ

ງ. ມີລູກຫຼາຍໂພດ

**6** ໃຫ້ອ່ານ ປຖກ 17:17

ກ. ອັບລາຮາມອາຍຸຈັກປີ? _____________________________________________

ຂ. ຊາລາຈັກປີ? ____________________________________________________

ເຂົາເກີນອາຍຸທີ່ຈະມີລູກໄດ້!

**7** ແຕ່ອັບລາຮາມຍັງຮັບຄຳສັນຍາຈາກພະເຈົ້າອີກ.

ກ. ໃນ ປຖກ 18:10 ພະເຈົ້າສັນຍາຫຍັງ? __________________________________

ຂ. ໃນ ໂລມ 4:21 ເຫັນວ່າຄວາມເຊື່ອຂອງອັບລາຮາມເປັນຢ່າງໃດ? _______________

ຄ. ຜົນສຸດທ້າຍຄຳສັນຍາຂອງພະເຈົ້າສຳເລັດຢ່າງໃດ? _________________________

ງ. ຊື່ຫຍັງ? (ປຖກ 17:19) _____________________________________________

**8** ອັບລາຮາມມີລູກຊາຍອີກຄົນໜຶ່ງທີ່ເກີດກ່ອນທາງເມຍນ້ອຍແລ້ວໃນອະນາຄົດເຮົາຈະຮຽນເລື່ອງນີ້ຢ່າງ ລະອຽດ.

ກ. ແມ່ນຍ້ອນລູກຄົນໃດທີ່ອັບລາຮາມຈະມີເຊື້ອສາຍມາກມາຍ? (ປຖກ 21:12) ________

ຂ. ອີຊາກນັ້ນເປັນລູກຂອງເມຍໃດ? ________________________________________

**9** ເຫັນວ່າອັບລາຮາມເຊື່ອຄໍາສັນຍາຂອງພະເຈົ້າຢ່າງໝັ້ນຄົງ.

ກ. ແມ່ນໂດຍຄວາມເຊື່ອທີ່ເພິ່ນລາຈາກພໍ່ແມ່ພີ່ນ້ອງໄປເຖິງດິນແດນທີ່ພະເຈົ້າສັນຍາໃຫ້ຄືປະເທດໃດ? ________________________________________

ຂ. ແມ່ນໂດຍຄວາມເຊື່ອໃນພະເຈົ້າທີ່ເກີດມີ __________ ຊາຍທາງເມຍຫຼວງ. (ຕື່ມຄວາມ)

ຄ. ລູກຄົນນັ້ນຊື່ຫຍັງ? ________________________________________

ງ. ແມ່ຂອງລູກຄົນນັ້ນຊື່ຫຍັງ? ________________________________________

**10** ອັບລາຮາມໄດ້ຮັບຫຍັງ (ສອງປະການ)ຈາກພະເຈົ້າຍ້ອນຄວາມເຊື່ອ?

________________________________ ແລະ ________________________________

*ຈົ່ງຮັບພິຈາລະນາ*

- *ໃຫ້ທ່ານຮັບພິຈາລະນາກ່ຽວກັບບັນຫາທີ່ອັບລາຮາມກັບຊາລາໄດ້ຮັບ. ທີ່ຊາລາເປັນໝັນແຕ່ອັບລາ ຮາມຍັງເຊື່ອຄໍາສັນຍາຂອງພະເຈົ້າ.*
- *ໃນສິ່ງທີ່ເປັນໄປບໍ່ໄດ້ ອັບລາຮາມຍັງເຊື່ອຄໍາສັນຍາຂອງພະເຈົ້າ.*
- *ທ່ານເຄີຍມີບັນຫາຢ່າງທີ່ແກ້ໄຂບໍ່ໄດ້ບໍ່? ຜົນສຸດທ້າຍເປັນຢ່າງໃດ?*
- *ໃນທຸກວັນນີ້ມີບັນຫາບໍ່? ທ່ານຈະໄວ້ວາງໃຈໃນພະເຈົ້າໄດ້ບໍ່?*

## ເຫັນຄວາມເຊື່ອເທື່ອທີສາມ

**11** ໃນເມື່ອອີຊາກຍັງບໍ່ທັນໃຫຍ່ ພະເຈົ້າທົດລອງຄວາມເຊື່ອຂອງອັບລາຮາມຢ່າງໜັກທີ່ສຸດ. ໃນປຖກ 22:2 ພະເຈົ້າສັ່ງໃຫ້ເພິ່ນເຮັດຫຍັງ? ________________________________

**12** ແຕ່ອັບລາຮາມເຊື່ອພະເຈົ້າຢ່າງໝັ້ນຄົງ. ເພິ່ນເຊື່ອວ່າພະເຈົ້າຈະໃຫ້ອີຊາກຄືນມາຈາກຕາຍໄດ້. ເພິ່ນພ້ອມໃຈທີ່ຈະເອົາອີຊາກບູຊາຕໍ່ພະເຈົ້າເພາະຫຍັງ? (ເລືອກຂໍ້ທີ່ຖືກ)

ໃຫ້ອ່ານ ເຮັບເລີ 11:19

ກ. ເພິ່ນຜິດຫວັງໃນພະເຈົ້າ ຈິນຄິດວ່າຄໍາສັນຍາຂອງພະເຈົ້າຈະບໍ່ສໍາເລັດ.

ຂ. ເພິ່ນເຊື່ອວ່າພະເຈົ້າສາມາດຍົກອີຊາກຄືນຈາກຕາຍໄດ້ ດັ່ງນັ້ນຄໍາສັນຍາຂອງພະເຈົ້າຍັງສໍາເລັດຢູ່.

**13** ໃຫ້ອ່ານ ປຖກ 22:12-13

ກ. ອັບລາຮາມເຊື່ອຟັງໃຜ? ________________________________________

ຂ. ພະເຈົ້າຫາຫຍັງໃຫ້ບູຊາແທນອີຊາກ? ________________________________

*ຈົ່ງພິຈາລະນາອີກ*

*ພະບິດາເອງຍອມຖະຫວາຍພະບຸດຂອງພະອົງ ແລະບໍ່ມີການຫຼີກເວັ້ນ. ເປັນຫຍັງພະເຈົ້າບໍ່ໄດ້ເອົາແກະເຖິກບູຊາແທນພະເຢຊູ? ທ່ານເອງພ້ອມທີ່ຈະມອບທຸກສິ່ງແກ່ພະອົງບໍ່?*

**14** ອັບລາຮາມມີຄວາມເຊື່ອໃນພະອົງຢ່າງແທ້ຈິງ. ເພິ່ນຮັບສອງປະການໃດຈາກພະເຈົ້າໂດຍຄວາມ ເຊື່ອ? ___________________________ ແລະ _________________________

## ທວນຄືນ

**15** ກ. ພະເຈົ້າທົດລອງຄວາມເຊື່ອຂອງອັບລາຮາມໂດຍສັ່ງໃຫ້ຍອມບູຊາຫຍັງ? ___________

ຂ. ອັບລາຮາມເຊື່ອຟັງບໍ່? ______________________________________________

ຄ. ພະເຈົ້າຫາຫຍັງໃຫ້ບູຊາແທນ? ________________________________________

**16** ໃຫ້ອ່ານ ຄລຕ 3:6-9 ພະເຈົ້າຖືວ່າເຮົາເປັນຄົນຊອບທຳໂດຍທາງຫຍັງ? (ເລືອກ)

ກ. ເປັນຄົນບໍລິສຸດ

ຂ. ເຊື່ອໃນພະເຈົ້າ

ຄ. ໄປນະມັດສະການ

**17** ພະເຈົ້າຖືວ່າຄົນໃດຊອບທຳ? (ເລືອກ)

ກ. ອັບລາຮາມຜູ້ດຽວ

ຂ. ຊາດຢິວທຸກຄົນ

ຄ. ທຸກຄົນທີ່ເຊື່ອໃນພະອົງ

*ໃຫ້ທ່ານທວນຄືນຈົນກວ່າເຂົ້າໃຈໝົດ ແລ້ວເປີດເສັງບົດນີ້.*

ຄຳຕອບ:

**1** *ພະເຈົ້າ*

**2** *ກ. ປະເທດ ຂ. ໃນເຮືອນດີໆ ຄ. ໃນຕູບຜ້າ ງ. 2500*

**3** *ກ. ປະເທດ ການາອານ (ດິນແດນກໍໄດ້)*

**4** *ກ. ການາອານ ຂ. ປາແລັດສະຕິນ ຄ. ອິດສະລາເອນ ງ. ອັບລາມ*

**5** *ຄ ຖືກ*

**6** *ກ. 100 ຂ. 90*

**7** *ກ. ຈະມີລູກ ຂ. ເຊື່ອໝັ້ນ ຄ. ເກີດມີລູກຊາຍ ງ. ອີຊາກ*

**8** *ກ. ອີຊາກ ຂ. ເມຍຫຼວງ (ຊາລາ)*

**9** *ກ. ການາອານ ຂ. ລູກ ຄ. ອີຊາກ ງ. ຊາລາ*

**10** *ດິນການາອານ ແລະ ລູກຊາຍ*

**11** *ໃຫ້ຖະຫວາຍອີຊາກ*

ຄຳຕອບ (ຕໍ່):

***12*** *ຂ ຖືກ*

***13*** *ກ. ພະເຈົ້າ* *ຂ. ແກະເຖິກ*

***14*** *ດິນແດນການາອານ ແລະ ລູກຊາຍ*

***15*** *ກ. ລູກຊາຍ* *ຂ. ເຊື່ອຟັງ* *ຄ. ແກະເຖິກ*

***16*** *ຂ ຖືກ*

***17*** *ຄ ຖືກ*

**ກາມປະຊຸມບົດທີ 2**

# ຄືນດີກັບພະເຈົ້າໂດຍທາງຄວາມເຊື່ອ

(ຄລຕ 3:6-9)

**1** ໃນບົດຮຽນທີ່ຜ່ານມາເຫັນວ່າໃນເມື່ອໂປໂລຍັງເປັນເດັກນ້ອຍ ໂປໂລສຶກສາພະຄຳພີເດີມໃນໂຮງທຳມະເທດສະ ໜາ ເມືອງຕາໂຊ. ເພິ່ນມັກຮຽນເລື່ອງອັບລາຮາມ ແລ້ວໃນຈົດໝາຍທີ່ເພິ່ນຂຽນໄປຫາຄຣິສຕະຈັກຕ່າງ ໆ ເຫັນເພິ່ນອ້າງເຖິງອັບລາຮາມຫຼາຍເທື່ອ. ເຊັ່ນ ໃນ ຄລຕ 3:6-9 ໂປໂລຍົກຊື່ຂອງ ອັບລາຮາມຫຼາຍເທື່ອ.

ກ. ໃນ ຄລຕ 3:6-9 ເຫັນຊື່ອັບລາຮາມຈັກເທື່ອ? ______________________________

ຂ. ມີຂໍ້ໃດແດ່ທີ່ອ້າງເຖິງພະພອນທີ່ມາທາງອັບລາຮາມ? ________________________

**2** ໂປໂລຖືວ່າພະພອນທີ່ມາທາງອັບລາຮາມສຳຄັນຫຼາຍ. ຄວາມທີ່ເພິ່ນຍົກມາຈາກພະທຳປະຖົມມະການ ໃນ ຄລຕ 3:8 ຍົກມາຈາກບົດແລະຂໍ້ໃດ?
(ຈົ່ງໃຊ້ຂໍ້ອ້າງລຸ່ມໜ້ານັ້ນ) ____________________________________________

*ໃນບົດຮຽນນີ້ ເຮົາຈະຕັ້ງຄຳຖາມເລື່ອງພະພອນນັ້ນ ແລ້ວຈະໃຫ້ຕອບດ້ວຍ. ໃຫ້ຄົນໜຶ່ງອ່ານອອກສຽງ:*

- *ພະເຈົ້າສັນຍາວ່າ ຈະໃຫ້ພະພອນຢ່າງໃດຕໍ່ອັບລາຮາມ?*
- *ເຮົາຈະຮັບພະພອນນັ້ນໄດ້ຢ່າງໃດ?*

## ພະເຈົ້າສັນຍາວ່າ ຈະໃຫ້ພະພອນຢ່າງໃດຕໍ່ອັບລາຮາມ

**3** ຕາມໃນຄາລາເຕຍ 3:8 ພະພອນນັ້ນເປັນຢ່າງໃດ? (ເລືອກ)

ກ. ເງິນພໍທີ່ຈະຊື້ສິ່ງຂອງດີ ໆ ຫຼາຍຢ່າງ

ຂ. ກອງທັບຈະຊະນະສັດຕູໄດ້

ຄ. ໃຫ້ຫົນທາງທີ່ຈະຄືນດີກັບພະເຈົ້າ

ງ. ເຮືອນຫຼັງງາມໆ

*ພະພອນທີ່ມີມາທາງອັບລາຮາມຄື ເຮົາຄືນດີກັບພະເຈົ້າໄດ້*

**4** ເປັນຫຍັງເຮົາຕ້ອງການຄືນດີກັບພະເຈົ້າ? (ໂລມ 3:10 ແລະ ພສສ 130:3)

________________________________________________________________

________________________________________________________________

________________________________________________________________

________________________________________________________________

*ອາຈານມາຕິນລູເຕີ ທີ່ເປັນຜູ້ນຳຄຣິສຕຽນໃນສະໄໝຫຼາຍຮ້ອຍປີກ່ອນບອກວ່າ:*

> *"ຫຼັກຄວາມເຊື່ອທີ່ສຳຄັນທີ່ສຸດສຳລັບຄຼິດສະຕຽນຄື ການຄືນດີກັບພະເຈົ້າ. ຖ້າເຮົາບໍ່ໄດ້ສອນເລື່ອງນັ້ນ ຄ້າຍຄືວ່າເຮົາປະຫຼັກຄວາມເຊື່ອຄຣິສຕຽນ."*

*ຖ້າສຳຄັນແນວນັ້ນເຮົາຄວນຮຽນຮູ້ແລະເຂົ້າໃຈໃຫ້ດີ ໆວ່າ. ພວກເຮົາເປັນຄົນບາບ ແຕ່ຖ້າເຮົາຖິ້ມໃຈເກົ່າ ເອົາໃຈໃໝ່ກັບມາເພິ່ງໃນພະເຢຊູ ພະອົງຈະຍົກຜິດບາບຂອງເຮົາໄປແລ້ວຈະຮັບເຮົາໄວ້ ແລະຈະຊົງຖືວ່າເຮົາເປັນ ຄົນຊອບທຳຕາມຄວາມຊອບທຳຂອງພະເຢຊູ.*

*ເປັນການອັດສະຈັນແທ້!*

**5** ໃຫ້ອ່ານ 2 ກລທ 5:21 ຖ້າເຮົາຈະເອົາຂໍ້ພະຄຳພີນັ້ນມາປຽບທຽບກັບເຄື່ອງນຸ່ງຫົ່ມ. ໃນ ນີ້ ເຄື່ອງນຸ່ງທີ່ເປື້ອນເປິ ປຽບທຽບກັບຄວາມບາບ ແຕ່ເຄື່ອງນຸ່ງທີ່ສະອາດດີປຽບກັບຄວາມຊອບທຳຂອງພະເຢຊູ. ພະເຢຊູຮັບເອົາຄວາມເປື້ອນເປິຂອງເຮົາ ແລະເອົາຄວາມສະອາດຂອງພະເຢຊູ ຕັ້ງໄວ້ເປັນຂອງເຮົາ. ຮູບຂ້າງຂວານີ້ ສະແດງວ່າຄວາມເປື້ອນເປິຂອງເຮົາ ຖືກທຳລາຍທີ່ໄມ້ກາງແຂນ. ເສື້ອ ເປື້ອນປຽບເໝືອນຫຍັງ? (ໃຫ້ເລືອກ)



ກ. ຄວາມຊອບທຳຂອງພະເຢຊູ

ຂ. ຄວາມບາບຂອງເຮົາ

ຄ. ການບໍ່ຍອມຄືນດີ

**6** ໃນຮູບນັ້ນສະແດງວ່າເຮົາຈະຮັບຄວາມຊອບທຳຂອງໃຜ? ________________________

**7** ກ. ໃຫ້ອ່ານພະນິມິດ 7:9 ຜູ້ທີ່ຢືນຢູ່ຕໍ່ໜ້າພະອົງນຸ່ງເຄື່ອງສີຫຍັງ? __________________

ຂ. ເຂົາມາຈາກປະເທດໃດ? ______________________________________________

*ໝາຍເຫດ: ປຖກ 12:3 ສະເໜີຄຳສັນຍາທີ່ສຳເລັດໃນ ພນມ 7:9 ກ່ຽວ ກັບທຸກຊາດທຸກປະເທດ.*

## ການປະຕິບັດ

**8** ຄາລາເຕຍ 3:6-9 ສອນວ່າເຮົາຈະຄືນດີກັບພະເຈົ້າ (ຫຼືວ່າພະເຈົ້າຖືວ່າເຮົາເປັນຄົນຊອບທຳ) ໄດ້ແຕ່ໂດຍຄວາມເຊື່ອໃນພະເຢຊູ. ອາຈານໂປໂລມັກສອນເລື່ອງນີ້ ເປັນຕົ້ນໃນພະທຳໂລມ ແລະ ພະທຳຄາລາເຕຍ.

ໃຫ້ພວກທ່ານພາກັນອ່ານຂໍ້ຕໍ່ໄປນີ້:

ຄາລາເຕຍ 3:6 (ເອົາສໍສີຂຽວຂີດກ້ອງຄຳ "ນັບວ່າເປັນຄວາມຊອບທຳ")
ຄລຕ 3:8 (ເອົາສໍສີຂຽວຂີດກ້ອງຄຳ "ຖືວ່າ. . . ເປັນຄົນຊອບທຳ")
ຄລຕ 3:11 (ຂີດກ້ອງຄຳ "ຖືວ່າເປັນຄົນຊອບທຳ" ທັງສອງເທື່ອ)
ຄລຕ 3:21 (ຂີດກ້ອງຄຳ "ຖືວ່າເປັນຄົນຊອບທຳ")
ຄລຕ 3:24 (ຂີດກ້ອງຄຳ "ຖືວ່າເປັນຄົນຊອບທຳ)

- *ໝາຍເຫດ: ອາຈານໂປໂລມັກເນັ້ນຢ້ຳແລ້ວຢ້ຳອີກເລື່ອງທີ່ພະເຈົ້າຊົງຖືວ່າເຮົາເປັນຄົນຊອບທຳ ໂດຍຄວາມເຊື່ອ. ພະເຈົ້າສັນຍາວ່າທັງໂລກນີ້ຈະໄດ້ຮັບພະພອນນັ້ນທາງລູກຫຼານຂອງອັບລາຮາມ.*

## ເຮົາຈະຮັບພະພອນນັ້ນໄດ້ຢ່າງໃດ?

**9** ສຳຄັນຫຼາຍທີ່ເຮົາຈະຮູ້ທາງຮັບພະພອນນີ້. ໃຫ້ອ່ານ ຄລຕ 3:6-9 ອີກເທື່ອໜຶ່ງ. ອັບລາຮາມເຮັດຢ່າງໃດກ່ອນພະເຈົ້າຈຶ່ງຈະຊົງຖືວ່າເປັນຄົນຊອບທຳ? ________________________

**10** ໃນຄລຕ 3:6-9 ນັ້ນເຫັນຄຳວ່າ "ເຊື່ອ" ຈັກເທື່ອ? ____________________________

____________________________________________________________

**11** ຄົນຢິວທົ່ວໄປໃນສະໄໝໂຊໂລນັ້ນ ຮູ້ເລື່ອງຄວາມເຊື່ອຂອງອັບລາຮາມແລ້ວ ເພາະມີຄຳຂຽນໄວ້ໃນ ປຖກ 15:6 ແມ່ນຂໍ້ໃດໃນ ຄລຕ 3:6-9 ທີ່ກ່າວອ້າງຈາກ ປຖກ 15:6? __________

**12** ຍ້ອນຄວາມເຊື່ອຂອງອັບລາຮາມນັ້ນ ພະເຈົ້າຈຶ່ງຖືວ່າເພິ່ນເປັນຄົນຊອບທຳ. ໃນການບ້ານບົດທີ່ສອງ ພາກປາຍ ເຫັນວ່າອັບລາຮາມເຊື່ອພະເຈົ້າແທ້ໃນສາມເທື່ອ ຄືເທື່ອໃດແດ່?

(1) ____________________________________________________________

(2) ____________________________________________________________

(3) ____________________________________________________________

**13** ໃຫ້ອ່ານເລື່ອງຄວາມເຊື່ອຂອງອັບລາຮາມໃນພະທຳເຮັບເລີ 11:8-19. ຄວາມເຊື່ອຂອງອັບລາຮາມເປັນຢ່າງໃດ? (ເລືອກ)

ກ. ເປັນແຕ່ທິດສະດີຢ່າງດຽວ
ຂ. ເພິ່ນເຊື່ອແດ່ ບໍ່ເຊື່ອແດ່
ຄ. ເພິ່ນດຳເນີນຊີວິດໂດຍຄວາມເຊື່ອ

**14** ໂປໂລກໍເຊື່ອໃນພະເຈົ້າ ອັບລາຮາມກໍເຊື່ອໃນພະເຈົ້າ ແຕ່ເຂົາເຊື່ອໃນຄໍາສັນຍາຂອງພະເຈົ້າ ຄົນ ລະແງ່ ເພາະອັບລາຮາມຢູ່ກ່ອນພະເຢຊູຫຼາຍປີ ແຕ່ໂປໂລຢູ່ຫຼັງພະເຢຊູ.

ກ. ໃນສອງຄົນນັ້ນ ຄົນໃດເຊື່ອຄໍາສັນຍາຂອງພະເຈົ້າທີ່ຍັງຈະສໍາເລັດໃນອະນາຄົດ? ______

ຂ. ຄົນໃດເຊື່ອໃນຄໍາສັນຍາທີ່ສໍາເລັດແລ້ວ? ________________________________




**15** ພວກເຮົາຢູ່ໃນທໍານອງດຽວກັນກັບໂປໂລຄືຢູ່ຫຼັງພະເຢຊູມາ. ໃຫ້ອ່ານຈາກ ເຮັບເລີ 11:39 ເຖິງ 12:2 ແລ້ວປຶກສາຫາລືກັນວ່າ ຄົນເຮົາໃນສະໄໝນີ້ໄດ້ປະໂຫຍດຫຼາຍກວ່າອັບລາຮາມ ຢ່າງໃດ? ________________________________________________________

*ໃຫ້ອ້ອນວອນຮ່ວມກັນທີ່ເຮົາຈະມີຄວາມເຊື່ອທີ່ທຽບເທົ່າກັບອັບລາຮາມ.*

ຄໍາຕອບ:

**1** *ກ. 4 ຂ. ຂໍ້ 8 ແລະ ຂໍ້ 9*

**2** *ປຖກ 12:3*

**3** *ຄ ຖືກ*

**4** *ເພາະພະເຈົ້າເປັນອົງຊອບທໍາ ແລະມະນຸດເປັນແຕ່ຄົນບາບທັງໝົດ (ຄໍາຕອບຄ້າຍຄືກັນກໍໄດ້)*

**5** *ຂ ຖືກ*

**6** *ພະເຢຊູ*

**7** *ກ. ຂາວ ຂ. ທຸກປະເທດ*

**8** *(ບໍ່ມີຕອບ)*

**9** *ເຊື່ອພະເຈົ້າ*

**10** *6 ເທື່ອ*

**11** *ຄລຕ 3:6*

**12** *(1)ເພິ່ນໜີປະບ້ານເດີມໄປປະເທດທີ່ພະເຈົ້າສັນຍາໄວ້*
*(2)ເພິ່ນເຊື່ອວ່າຈະມີລູກທາງຊາລາ ເຖິງວ່າຊາລາເປັນໝັນກໍຕາມ*
*(3)ເພິ່ນຍອມຖະຫວາຍບູຊາອີຊາກ ເພາະເຊື່ອວ່າພະເຈົ້າຈະໃຫ້ຄືນມາໃໝ່*

**13** *ຄ ຖືກ*

**14** *ກ. ອັບລາຮາມ ຂ. ໂປໂລ*

**15** *(ບໍ່ມີຄໍາຕອບຕາຍຕົວ)*